# ບົດທີ 20

## ເຄັດເຊມາເນ




**1** ພະເຢຊູຕັ້ງສິນມະຫາສະນິດພ້ອມກັບພວກສາວົກແລ້ວເຂົາລົງມາຈາກຫ້ອງຊັ້ນເທິງ. ຕາມໃນ ໂຢຮັນ 18:1 ພະເຢຊູແລະພວກສາວົກໄປໃສ? (ຕື່ມຄວາມຂາດ)
ເຂົາຂ້າມຫ້ວຍ __________________________ ບ່ອນມີ ______________________ .

**2** ໃຫ້ອ່ານ ມັດທາຍ 26:36
ກ. ສວນນັ້ນຊື່ຫຍັງ? ______________________________________________
ຂ. ໃຫ້ທ່ານເປີດເບິ່ງແຜ່ນທີ່ໜ້າປົກບົດທີ 2. ສວນເຄັດເຊມາເນໝາຍໄວ້ດ້ວຍຕົວອັກສອນ ໃດ? ______________________________________________________
ຄ. ສວນນັ້ນຢູ່ພູໃດ? ______________________________________________

*ເຫດການເຫຼົ່ານີ້ຕົກວັນພະຫັດ ໃຫ້ອ່ານໝົດເລື່ອງສວນເຄັດເຊມາເນໃນມັດທາຍ 26:36-46*

**3** ກ. ພະອົງຈະໄປເຮັດຫຍັງໃນສວນເຄັດເຊມາເນ? ___________________________
ຂ. ພວກສາວົກສາມຄົນທີ່ຢູ່ໃກ້ສິດເຂົ້າໃນສວນກັບພະອົງ. ທ່ານເຄີຍຮຽນຮູ້ຊື່ຂອງເຂົາທັງສາມ ຄົນບໍ່ ຖ້າບໍ່ຈື່ໃຫ້ອ່ານມາ ລະໂກ 14:33 ສາມຄົນນັ້ນຊື່ຫຍັງ? __________________
ຄ. ພະອົງປະເຂົາໄວ້ເພື່ອໄປອ້ອນວອນຈັກເທື່ອ? ___________________________
ງ. ພະອົງກັບມາຫາເຂົາເຫັນເຂົາເຮັດຫຍັງ? _______________________________
ຈ. ແມ່ນເຂົາອ່ອນກຳລັງດ້ານຈິດໃຈຫຼືດ້ານກຳລັງ? __________________________
ສ. ພະເຢຊູຍອມເອົາຕາມໃຈໃຜ? ___________________________________

**4** ຕາມທີ່ທ່ານຮຽນຮູ້ໃນຫຼັກສູດນີ້ ບົດທີ 6 ພະເຈົ້າສ້າງມະນຸດໃຫ້ບໍລິບູນໃນສາມດ້ານໃດ? (ກັບໄປເບິ່ງກໍໄດ້) ________________ __________________ ___________________

**5** ແຕ່ເມື່ອມະນຸດຕົກໃນບາບຈິດໃຈມະນຸດນັ້ນເລີຍຄິດໂກງ

ກ. ຄວາມຄິດເລີຍເປັນຢ່າງໃດ? ____________________________________________

ຂ. ກໍາລັງເດ? _______________________________________________________

**6** ໃນເອເຟໂຊ 2:3 ອາຈານໂປໂລບັນລະຍາຍເລື່ອງສະພາບທີ່ຄິດໂກງນັ້ນວ່າ ເຂົາເຄີຍດໍາເນີນຊີວິດຕາມຫຍັງ?__________________________________________________________

**7** ໂລມ 7:18 ອາຈານໂປໂລບອກຊໍ້າອີກວ່າ “ເພາະວ່າເຈຕະນາດີນັ້ນເຮົາກໍມີຢູ່ ແຕ່ທີ່ຈະເຮັດການດີນັ້ນ ເຮົາບໍ່ໄດ້ ເຮັດ.” ອາຈານໂປໂລອ່ອນໃນແງ່ໃດ? _________________________

**8** ຜູ້ທີ່ຖະຫວາຍຕົວກັບພະອົງຢູ່ສະເໝີຈະເປັນຢ່າງໃດ? (ຕື່ມຄວາມທີ່ຂາດ)

ກ. ຈະບໍ່ເຮັດຕາມໃຈ _____________________________________________________

ຂ. ຈະເຮັດຕາມ _________________________________________________________

**9** ຜູ້ທີ່ບໍ່ຍອມຖະຫວາຍຕົວກັບພະເຈົ້າຈະເປັນຢ່າງໃດ? (ຕື່ມຄວາມຂາດ)

ກ. ຈະບໍ່ເຮັດຕາມ _______________________________________________________

ຂ. ຈະເຮັດຕາມ _________________________________________________________

**10** ການມອບຕົວໃຫ້ພະເຈົ້າແລະການຖະຫວາຍຕົວໃຫ້ພະເຈົ້າເປັນອັນໜຶ່ງອັນດຽວກັນ. ຄົນຢ່າງນັ້ນຈະດໍາເນີນຊີວິດຕາມ ຫຍັງ? ____________________________________________

**11** ທ່ານໄດ້ຮຽນຮູ້ແລ້ວວ່າ ພະເຢຊູເປັນທັງພະເຈົ້າແທ້ ທັງມະນຸດແທ້.

ກ. ໃນ ມທ 26:45 ພະເຢຊູອ້າງເຖິງຕົນເອງໃນສະພາບໃດ? ______________________

ຂ. ໃນສະພາບເປັນມະນຸດນັ້ນ ພະເຢຊູມີຮູບຮ່າງທີ່ຮູ້ສຶກເຈັບປວດ. ພະອົງເຫັນຮູ້ວ່າຈະຕ້ອງຕາຍທີ່ໄມ້ກາງແຂນພະອົງ ຈະຍິນດີ ຫຼືຢາກຫຼີກເວັ້ນ? ________________________

**12** ກ. ໃນ ມທ 26:39 ພະອົງມອບຕົວໄວ້ໃຫ້ພະເຈົ້າໂດຍເວົ້າຄວາມໃດ?

__________________________________________________________________

ຂ. ໃນ ມທ 26:42 ເດ? ___________________________________________________

**13** ກ. ຜູ້ທີ່ມອບຕົວໄວ້ກັບພະເຈົ້າຍອມໃຫ້ເປັນໄປຕາມຫຍັງ? _______________________

ຂ. ພະເຢຊູໃນສະພາບເປັນມະນຸດບໍ່ຢາກຖືກຫຍັງ? ______________________________

ຄ. ແຕ່ນໍ້າພະໄທຂອງພະບິດາຈະໃຫ້ພະອົງຖືກຫຍັງ? _____________________________

**14** ການມອບຕົວໄວ້ໃຫ້ພະເຈົ້າເປັນສິ່ງທີ່ກິນກຳລັງຫຼາຍແທ້. ພວກໝໍບອກວ່າ ບາງເທື່ອຄວາມກົດດັນສຸດໃນວິນ ຍານອາດຈະເຮັດໃຫ້ເສັ້ນເລືອດແຕກຈົນກວ່າຄົນນັ້ນມີເລືອດໄຫຼອອກກັບເຫື່ອ. ໃນລູກາ 22:44 ເຫັນຫຼັກຖານໃດທີ່ ພະເຢຊູພົບຄວາມກົດດັນສຸດໃນວິນຍານ?

___________________________________________________________________

*ຖ້າເຮົາຈະກະທຳຕາມນ້ຳພະໄທຂອງພະເຈົ້າ ກໍຕ້ອງກິນກຳລັງເຮົາຫຼາຍ. ພະເຢຊູມອບຕົວໄວ້ໃຫ້ພະບິດາແລ້ວມອບ ຕົວໄວ້ໃຫ້ພວກສັດຕູຊ້ຳ*

## ຮຽນໂດຍວິທີສັງເກດ ແລະປຽບທຽບ

**15** ໃຫ້ອ່ານມັດທາຍ 26:47-56



ກ. ແມ່ນສາວົກຄົນໃດທີ່ບໍ່ໄດ້ນອນຫຼັບໃນເວລານັ້ນ?

________________________________________

ຂ. ປະຊາຊົນທີ່ຖືດາບຫຼືໄມ້ຄ້ອນ ມາຈາກພວກໃດ?

________________________________________

ຄ. ຢູດາໄດ້ນັດໝາຍສຳຄັນຢ່າງໃດໃນເມື່ອຈະມອບພະອົງໄວ້?

________________________________________

ງ. ໃນໂຢຮັນ 18:10 ແມ່ນສາວົກຄົນໃດທີ່ຖອດດາບອອກ?

________________________________________

ຈ. ເປໂຕຟັນໃຜ? ________________________________________

ສ. ໃນລູກາ 22:51 ພະເຢຊູເຮັດຫຍັງ? ______________________________

ຊ. ໃນມັດທາຍ 26:52 ພະເຢຊູເວົ້າຢ່າງໃດ? ____________________________

________________________________________________________

ຍ. ຕາມໃນ ມທ 26:51 ແລະ 53 ແມ່ນສອງພວກໃດທີ່ພ້ອມຈະປ້ອງກັນພະອົງ?

________________________________________________________

ດ. ພະເຢຊູຕັ້ງໃຈຈະເຮັດຕາມນ້ຳພະໄທໃຜ? ____________________________

ຕ. ພະເຢຊູຢາກໃຫ້ຫຍັງສຳເລັດ? ________________________________

**16** ພະເຢຊູຢູ່ໃກ້ສິດກັບພະບິດາ, ເທື່ອໃດທີ່ພະເຢຊູຕໍ່ສູ້ການທົດລອງເຮັດບໍ່ຖືກກັບນ້ຳພະໄທຂອງພະເຈົ້າ ພະອົງຕໍ່ສູ້ ໂດຍໃຊ້ຫຍັງ? ________________________________

**17** ຖ້າເຮົາຂາດກຳລັງດ້ານວິນຍານ ພໍທີ່ຈະມອບຕົວໄວ້ກັບພະເຈົ້າເຮົາຄວນອ້ອນວອນ.

ກ. ໃນ ມທ 26:41 ພະອົງບອກພວກສາວົກວ່າຈົ່ງເຮັດຫຍັງ? ____________________

ຂ. ເຂົາເຊື່ອຟັງບໍ່? ________________________________________

ຄ. ເຂົາຂາດບໍ່ເຮັດຫຍັງ? ____________________________________

**18** ກ. ໃນເມື່ອພະເຢຊູອ້ອນວອນ ພວກສາວົກເຮັດຫຍັງ? ___________________________

ຂ. ເມື່ອພວກສາວົກນອນຫຼັບ ພະອົງເຮັດຫຍັງ? _______________________________

ຄ. ໃນ ມທ 26:40 ພະເຢຊູປະນາມພວກສາວົກເຫຼົ່ານັ້ນໂດຍຖາມຫຍັງ?

_______________________________________________________________

**19** ກ. ແມ່ນໃຜທີ່ອ່ອນກຳລັງໃນສວນເຄັດເຊມາເນ? _____________________________

ຂ. ໃຜມອບຕົວໄວ້ໃຫ້ເຮັດຕາມນ້ຳພະໄທຂອງພະເຈົ້າ? __________________________

ຄ. ພະເຢຊູມີຄວາມສາມາດມອບຕົວໄວ້ກັບພະບິດາໂດຍການໃດ? _________________

**20** ພະວິນຍານບໍລິສຸດຈະຊ່ວຍໃຫ້ເຮົາເຮັດຕາມນ້ຳພະໄທຂອງພະເຈົ້າໄດ້. ເຮົາມີທາງເລືອກສອງເສັ້ນຄື: ເຮົາຈະຕິດຕາມນ້ຳພະໄທຂອງພະເຈົ້າຢ່າງພະເຢຊູ ຫຼືເຮົາຈະຕິດຕາມກຳລັງກາຍຂອງເຮົາເອງຢ່າງພວກສາວົກໃນສວນເຄັດເຊມາເນ. ເທື່ອໃດທີ່ເຮົາບໍ່ອາໄສອຳນາດຂອງພະວິນຍານບໍລິສຸດເຮົາຈະບໍ່ເຊື່ອຟັງພະເຈົ້າ. ໃຫ້ອ່ານ ເຮັບເລີ 10:25

ກ. ລາງຄົນເຄີຍປະຫຍັງ? _____________________________________________

ຂ. ເຂົາເຄີຍບໍ່ເຮັດຕາມນ້ຳພະໄທຂອງໃຜ? __________________________________

**21** ກ. ແຕ່ມາເຖິງວັນສະບາໂຕ ພະເຢຊູໄປໃສ? (ລູກາ 4:16) _______________________

ຂ. ພະອົງໄປໂຮງທຳຕາມ ________________________________ . (ຕື່ມຄວາມທີ່ຂາດ)

**22** ເຮົາທຸກຄົນຄວນເອົາພະເຢຊູເປັນແບບຢ່າງໃນການນັ້ນ. ພະເຢຊູເຄີຍແຕ່ເຮັດຕາມນ້ຳພະໄທຂອງພະເຈົ້າ.

ກ. ໃນເຮັບເລີ 10:25 ເຮົາເຫັນແບບຢ່າງຄົນທີ່ເຄີຍບໍ່ເຮັດຕາມນ້ຳພະໄທໂດຍການຫຍັງ?

_______________________________________________________________

ຂ. ໃນລູກາ 4:16 ເຫັນແບບຢ່າງຂອງພະເຢຊູທີ່ເຄີຍເຮັດຕາມນ້ຳພະໄທໂດຍການຫຍັງ?

_______________________________________________________________

**23** ໃນແຕ່ລະຂໍ້ຕໍ່ໄປນີ້ ໃຫ້ທ່ານຂີດ √ ຂ້າງສິ່ງທີ່ຈະຊ່ວຍໃຫ້ເຮົາຕັ້ງນິໄສດີໃນການກະທຳຕາມນ້ຳພະໄທຂອງພະເຈົ້າແລະຂີດ X ຂ້າງຄວາມໃດທີ່ຂັດຂວາງ

ກ. ______ ເຊື່ອຟັງພະເຈົ້າ ຂ. ______ ຕົວະ

ຄ. ______ ຄວາມເປັນລະບຽບ ງ. ______ ສະແດງໃຈກະລຸນາຕໍ່ເຈົ້າໜ້າທີ່

ຈ. ______ ສະແດງໃຈກະລຸນາຕໍ່ລູກນ້ອງ ສ. ______ ຫຼອກລວງ

ຊ. ______ ເວົ້າຄວາມພະຍານບໍ່ຈິງ ຍ. ______ ລັກເລັກຂະໂມຍນ້ອຍ

ດ. ______ ບໍ່ອ່ານພະຄຳພີ ຕ. ______ ການເວົ້າຂວັນ

ຖ. ______ ບໍ່ເຊື່ອຟັງນາຍ ທ. ______ ໃຈເມດຕາ

ນ. ______ ມີຄວາມສຸກ ບ. ______ ປະການປະຊຸມ

ປ. ______ ບໍ່ເອົາໃຈໃສ່ ຜ. ______ ຂາດການອ້ອນວອນ

**24** ບາງຄົນອາດຈະຖືວ່າສິ່ງນ້ອຍໆ ນັ້ນບໍ່ສຳຄັນ ແຕ່ທີ່ຈິງສິ່ງນ້ອຍເຫຼົ່ານັ້ນຮ່ວມປະກອບເປັນນິໄສຂອງເຮົາ. ຖ້າເຮົາ ເຮັດຕາມນ້ຳພະໄທໃນສິ່ງນ້ອຍນັ້ນ ຕໍ່ໆ ໄປເຮົາອາດຈະລຶ້ງເຄີຍໃນການນັ້ນດ້ວຍ.

ກ. ໃຫ້ອ່ານ ເອເຟໂຊ 2:3 ເມື່ອກ່ອນເຮົາທັງປວງເຄີຍດຳເນີນຊີວິດຕາມຫຍັງ?
(ຕື່ມຄວາມຂາດ) _______________ ຂອງ ______________________________

ຂ. ໃຫ້ທ່ານກັບໄປເບິ່ງຂໍ້ຄວາມທີ່ໝາຍດ້ວຍຕົວ X ແລະໃຫ້ທ່ານຂຽນອີກ 3 ປະການທີ່ເຄີຍຂັດຂວາງການກະທຳ ຕາມນ້ຳພະໄທໃນຊີວິດຂອງທ່ານເອງ. ______________________

_______________________________ _______________________________

**25** ຖ້າເຮົາຈະດຳເນີນຊີວິດຢ່າງທີ່ພໍພະໄທພະເຈົ້າເຮົາຕ້ອງມີນິໄສທີ່ເຄີຍກະທຳຕາມ. ໃຫ້ອ່ານ ໂຢຮັນ 8:29

ກ. ພະເຢຊູເຄີຍເຮັດຕາມຫຍັງຢູ່ສະເໝີ? ____________________________________

ຂ. ພະອົງທີ່ຊົງໃຊ້ພະເຢຊູມາບໍ່ປະພະເຢຊູໄວ້ໃຫ້ຢູ່ຢ່າງໃດ? _____________________

ຄ. ບໍ່ປະໄວ້ຜູ້ດຽວເພາະຫຍັງ? _____________________________________________

**26** ໃນເວລາພະເຢຊູຮັບບັບຕິສະມາພະສຸລະສຽງຈາກພະເຈົ້າກ່າວຢ່າງໃດ?
(ຖ້າບໍ່ຈື່ດີ ໃຫ້ອ່ານ ມທ 3:16-17) ______________________________________________

_____________________________________________________________________

**27** ຄຳວ່າ "ຊອບໃຈ" ນັ້ນໝາຍຄວາມວ່າ ເຮົາມັກແລະພໍໃຈໃນສິ່ງທີ່ເພິ່ນກະທຳມາ. ຖ້າເຮົາຈະໃຫ້ພະເຈົ້າຊອບໃຈໃນ ເຮົາເຮົາຕ້ອງເຮັດຕາມນ້ຳພະໄທຂອງພະເຈົ້າຢູ່ສະເໝີ.

ກ. ໃນ ມທ 3:17 ແມ່ນໃຜທີ່ຊອບໃຈໃນພະເຢຊູ? ______________________________

ຂ. ບໍ່ພຽງແຕ່ເທົ່ານັ້ນຄືພະບິດາ ________________ ພະບຸດນັ້ນດ້ວຍ. (ຕື່ມຄວາມທີ່ຂາດ)

ຄ. ແມ່ນເພາະເຫດໃດທີ່ພະບິດາຮັກພະບຸດ ແລ້ວຈະບໍ່ປະໃຫ້ຢູ່ຜູ້ດຽວ? (ຕື່ມຄວາມຂາດ)
ເພາະພະເຢຊູເຮັດຕາມຊອບ __________________________________ ຢູ່ສະເໝີ.

**28** ພະເຢຊູມີຫຼາຍຊື່ຄື: ພະຄຼິດ ພະເມຊີອາ ຜູ້ທີ່ພະເຈົ້າຊົງເລືອກ ພະບຸດຂອງພະເຈົ້າ ບຸດມະນຸດ ໆ ລ ໆ. ໃນມັດທາຍ 12:18 ພະບິດາຮ້ອງພະເຢຊູຕາມອີກຊື່ໜຶ່ງຄື "ຜູ້ເປັນ ___________________________ ແລະ ຊອບໃຈ ຂອງເຮົາ." (ຕື່ມຄວາມທີ່ຂາດ)

**29** ຄຳວ່າ "ຜູ້ເປັນທີ່ຮັກ"ນັ້ນເປັນຊື່ທີ່ພະບິດາໃສ່ໃຫ້ພະເຢຊູເພາະວ່າພະເຢຊູກະທຳຕາມຫຍັງຢູ່ສະເໝີ? ___________________________________________________________

**30** ພະເຢຊູຮັບພະພອນຈາກພະເຈົ້າທັງສອງດ້ານເພາະໄດ້ກະທຳຕາມນ້ຳພະໄທຂອງພະເຈົ້າຢູ່ຕະຫຼອດເວລາ. (ຕື່ມຄວາມທີ່ຂາດ)

ກ. ພະບິດາຊົງ ______________________ ພະບຸດ

ຂ. ພະບິດາຊົງ ______________________ ຢູ່ກັບພະບຸດ

**31** ໃນໂຢຮັນ 14:23 ພະເຢຊູບອກວ່າ:

> "ຖ້າຜູ້ໃດຮັກເຮົາ ຜູ້ນັ້ນຈະຖືຮັກສາພະທຳຂອງເຮົາ ແລະພະບິດາຂອງເຮົາຈະຊົງຮັກຜູ້ນັ້ນແລ້ວເຮົາທັງສອງຈະມາຫາຜູ້ນັ້ນ ແລະຈະຕັ້ງຢູ່ກັບຜູ້ນັ້ນ."

ໃນຂໍ້ນີ້ເຫັນວ່າ ທີ່ເຮົາຈະເຊື່ອຟັງຕາມຄຳສອນ ຂອງພະອົງ ເປັນອັນດຽວກັນກັບການກະທຳຕາມນ້ຳພະໄທຂອງພະເຈົ້າ.

ກ. ຖ້າເຮົາກະທຳຕາມນ້ຳພະໄທຂອງພະອົງ ແມ່ນຜູ້ໃດຈະຮັກເຮົາ? ________________

ຂ. ຜູ້ໃດຈະມາສະຖິດຢູ່ກັບເຮົາ? ________________________________________

**32** ຄົນໃດທີ່ມອບຕົວໄວ້ໃຫ້ພະບິດາຈະຮັບພະພອນໃຫຍ່ສອງຢ່າງຄື: (ຕື່ມຄວາມຂາດ) ພະເຈົ້າຊົງ __________________ ແລະພະເຈົ້າຊົງ __________________________ ຢູ່ນຳ

*ຖ້າຄຶດສະຫງຽບທຸກຄົນ ຈະມອບຕົວໄວ້ໃຫ້ພະເຈົ້າທີ່ປະຊຸມຂອງເຮົາຈະມີການປ່ຽນແປງຫຼາຍແທ້*

*ເຖິງບົດເສັງທີ 20 ແລ້ວ!*

**ຄຳຕອບ:**

**1** *ເກັດໂລນ... ສວນ*

**2** *ກ. ເຄັດເຊມາເນ ຂ. ๓ ຄ. ໝາກກອກເທດ*

**3** *ກ. ອ້ອນວອນ ຂ. ເປໂຕ ຢາໂກໂບ ໂຢຮັນ ຄ. 3 ເທື່ອ ງ. ນອນຫຼັບຢູ່*
*ຈ. ດ້ານກຳລັງ ສ. ພະບິດາ*

**4** *ຈິດໃຈ ຄວາມຄິດ ກຳລັງ*

**5** *ກ. ຄຶດໂກງ ຂ. ຄຶດໂກງ*

**6** *ຕັນຫາຂອງຝ່າຍມະນຸດທຳມະດາ*

**7** *ກຳລັງ (ເນື້ອກາຍ)*

**8** *ກ. ຕົນເອງ ຂ. ນ້ຳພະໄທຂອງພະເຈາ*

**9** *ກ. ນ້ຳພະໄທຂອງພະເຈາ ຂ. ໃຈຕົນເອງ*

**10** *ຕາມນ້ຳພະໄທຂອງພະເຈາ*

**11** *ກ. ບຸດມະນຸດ ຂ. ຢາກຫຼີກເວັ້ນ*

**12** *ກ. ໃຫ້ເປັນໄປຕາມນ້ຳພະໄທຂອງພະອົງເທີນ*
*ຂ. ໃຫ້ເປັນໄປຕາມນ້ຳພະໄທຂອງພະອົງ*

**13** *ກ. ນ້ຳພະໄທຂອງພະອົງ ຂ. ຄຶງໄວ້ທີ່ໄມ້ກາງແຂນ ຄ. ຄຶງໄວ້ທີ່ໄມ້ກາງແຂນ*

**14** *ເຫື່ອຂອງພະອົງເກີດເປັນເໝືອນເລືອດ*

**ຄຳຕອບ (ຕໍ່):**

**15** *ກ. ຢູດາ*

*ຂ. ປະໂລຫິດຕົນໃຫຍ່ ກັບພວກເຖົ້າແກ່*

*ຄ. ເພິ່ນຈະຈູບຄຳນັບພະອົງ*

*ງ. ຊີໂມນເປໂຕ*

*ຈ. ຂ້ອຍໃຊ້ຂອງມະຫາປະໂລຫິດຄົນໜຶ່ງ*

*ສ. ບາຍຫູຄົນນັ້ນເຮັດໃຫ້ດີເປັນປົກກະຕິ*

*ຊ. ຈົ່ງເອົາດາບຂອງທ່ານມ້ຽນໄວ້ບ່ອນມັນ ເພາະວ່າ ບັນດາຜູ້ທີ່ຖືດາບກໍຈະຖືກທຳລາຍດ້ວຍດາບ*

*ຍ. ພວກສາວົກ ແລະເທວະດາ*

*ດ. ພະເຈົ້າ*

*ຕ. ພະຄຳພີ*

**16** *ຄຳອ້ອນວອນ*

**17** *ກ. ຈົ່ງເຝົ້າລະວັງ ແລະອ້ອນວອນ ຂ. ບໍ່ ຄ. ອ້ອນວອນ*

**18** *ກ. ນອນຫຼັບ ຂ. ອ້ອນວອນ*

*ຄ. ພວກທ່ານບໍ່ສາມາດຈະຄອຍເຝົ້າຢູ່ກັບເຮົາຈັກຊົ່ວໂມງດຽວຫຼື*

**19** *ກ. ພວກສາວົກ ຂ. ພະເຍຊູ ຄ. ອ້ອນວອນ*

**20** *ກ. ການປະຊຸມ ຂ. ຂອງພະເຈົ້າ*

**21** *ກ. ໂຮງທຳ ຂ. ເຄີຍ*

**22** *ກ. ປະການປະຊຸມ ຂ. ໄປໂຮງທຳ (ຕາມເຄີຍ)*

**23** *√ ເຂົາກັບ ກ ຄ ງ ຈ ທ ນ X ເຂົາກັບ ຂ ສ ຊ ຍ ດ ຕ ຖ ບ ປ ຜ*

**24** *ກ. ຕັນຫາ... ຝ່າຍມະນຸດທຳມະດາ ຂ. (ບໍ່ມີຄຳຕອບຕາຍຕົວ)*

**25** *ກ. ຊອບພະໄທຂອງພະອົງ ຂ. ຢູ່ຜູ້ດຽວ*

*ຄ. ເພາະເຮັດຕາມຊອບພະໄທຂອງພະອົງຢູ່ສະເໝີ.*

**26** *ທ່ານຜູ້ນີ້ເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈຫຼາຍໃນທ່ານ.*

**27** *ກ. ພະບິດາ ຂ. ຮັກ ຄ. ພະໄທພະອົງ*

**28** *ທີ່ຮັກ*

**29** *ນ້ຳພະໄທຂອງພະເຈົ້າ*

**30** *ກ. ຮັກ ຂ. ສະຖິດ*

**31** *ກ. ພະບິດາ ຂ. ພະບິດາກັບພະບຸດ*

**32** *ຮັກ... ສະຖິດ*